ເອກະສານຂໍ້ມູນໂຄງການສະບັບແປເປັນພາສາລາວນີ້ແມ່ນອີງຕາມສະບັບພາສາອັງກິດລົງວັນທີ 13 ກຸມພາ 2013.

# ເອກະສານຂໍ້ມູນໂຄງການ

ເອກະສານຂໍ້ມູນໂຄງການແມ່ນໄດ້ປະກອບດ້ວຍຂໍ້ມູນກ່ຽວກັບໂຄງການ ຫລື ແຜນງານຕ່າງໆ: ເນື່ອງຈາກວ່າ ໂຄງການດັ່ງກ່າວນີ້ ແມ່ນກຳລັງໄດ້ຮັບການຈັດຕັ້ງປະຕິບັດຢູ່, ດັ່ງນັ້ນ ມີບາງຂໍ້ມູນອາດຈະບໍ່ໄດ້ກວມລວມເອົາຢູ່ໃນເອກະສານສະບັບທຳອິດນີ້ ແຕ່ຂໍ້ມູນເພີ່ມເຕີມຈະໄດ້ຖືກຕື່ມໃສ່ເອກະສານຂໍ້ມູນໂຄງການດັ່ງກ່າວພາຍຫຼັງທີ່ມີຂໍ້ມູນເພີ່ມຕື່ມ. ຂໍ້ມູນ ກ່ຽວກັບ ບັນດາໂຄງການທີ່ໄດ້ຖືກນຳສະເໜີ ແມ່ນກຳລັງຖືກພິຈາລະນາ ແລະ ປະກອບຄຳເຫັນຢູ່.

| | |
|---|---|
| **ວັນທີສ້າງເອກະສານຂໍ້ມູນໂຄງການ** | – |
| **ເອກະສານຂໍ້ມູນໂຄງການໄດ້ຮັບການປັບປຸງໃນວັນທີ** | 22 ພະຈິກ 2012 |

| | |
|---|---|
| **ຊື່ໂຄງການ** | ໂຄງການນ້ຳປະປາແລະສຸຂາພິບານ |
| **ປະເທດ** | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| **ເລກທີໂຄງການ/ແຜນງານ** | 45301-001 |
| **ສະຖານະພາບ** | ອະນຸມັດແລ້ວ |
| **ສະພາບທີ່ຕັ້ງພູມມີສາດ** | – |

ໃນການກະກຽມແຜນງານ ຫລື ຍຸດທະສາດຢູ່ໃນປະເທດໃດໜຶ່ງ, ການສະໜອງທຶນໃຫ້ແກ່ໂຄງການໃດໜຶ່ງ, ຫລື ການກຳໜົດເອົາ, ຫລືການອ້າງອີງເຖິງ, ເຂດແດນສະເພາະ ຫລື ທີ່ຕັ້ງພູມສັນຖານໃດໜຶ່ງທີ່ໄດ້ລະບຸໃນເອກະສານສະບັບນີ້, ທະນາຄານພັດທະນາອາຊີບໍ່ໄດ້ມີເຈດຕະນາກໍ່ໃຫ້ເກີດການປ່ຽນແປງທາງດ້ານກົດໝາຍ ຫລື ຕໍ່ສະຖານະພາບຂອງເຂດແດນ ຫລື ພື້ນທີ່ໃດໆທັງນັ້ນ.

| | |
|---|---|
| **ການຈັດປະເພດຂະແໜງການ ແລະ/ຫລື ຂະແໜງການຍ່ອຍ** | ການສະໜອງນ້ຳສະອາດແລະພື້ນຖານໂຄງລ່າງໃນເຂດເທດສະບານ ແລະ ການບໍລິການອື່ນໆ/ແຜນງານການສະໜອງນ້ຳແລະສຸຂາພິບານ |
| **ການຈັດປະເພດຫົວຂໍ້ເນື້ອໃນ** | ການພັດທະນາຄວາມອາດສາມາດ<br>ການເຕີບໃຫຍ່ຂະຫຍາຍຕົວທາງເສດຖະກິດ<br>ຄວາມຍືນຍົງທາງສິ່ງແວດລ້ອມ<br>ຄວາມສະເໝີພາບຍິງ-ຊາຍ |
| **ໝວດສົ່ງເສີມບົດບາດຍິງຊາຍ** | ການເຊື່ອມສານບົດບາດຍິງ-ຊາຍໃຫ້ໄດ້ຮັບໝາກຜົນ |

## ການສະໜອງທຶນ

| ປະເພດ/ ຮູບແບບການຊ່ວຍເຫລືອ | ອະນຸມັດເລກທີ | ແຫລ່ງທຶນ | ຈຳນວນມູນຄ່າອະນຸມັດ (ພັນ) |
|---|---|---|---|
| ການຊ່ວຍເຫຼືອດ້ານວິຊາການ | 8150 | ກອງທຶນພິເສດເພື່ອການຊ່ວຍເຫຼືອດ້ານວິຊາການ | 800 |
| ລວມທັງໝົດ | | | 800 ໂດລາສະຫະລັດ |

## ສະຫລຸບບັນຫາດ້ານສັງຄົມ ແລະ ສິ່ງແວດລ້ອມ

ດ້ານສິ່ງແວດລ້ອມ

–

ການຍ້າຍຖິ່ນຖານທີ່ບໍ່ແມ່ນຄວາມສະໝັກໃຈ

–

ຄົນທອ້ງຖິ່ນ

–

## ການສື່ສານ, ການມີສ່ວນຮ່ວມ ແລະ ການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ

ໃນໄລຍະອອກແບບໂຄງການ

–

ໃນໄລຍະຈັດຕັ້ງປະຕິບັດໂຄງການ

–

## ລາຍລະອຽດໂຄງການ

ໂຄງການນີ້ຈະຊ່ວຍການຂະຫຍາຍບັນດາລະບົບຕ່າງໆໂດຍການສະໜອງທຶນໃຫ້ນ້ຳປະປາຂັ້ນແຂວງ (ໜ່ວຍງານນ້ຳປະປະປາຂັ້ນແຂວງ) ທີ່ປະຕິບັດວຽກງານໄດ້ດີ ແລະ ສະເໜີຂໍງົບປະມານສຳລັບວຽກງານສ້ອມແປງຂະໜາດນ້ອຍເພື່ອຟື້ນຟູແລະປັບປຸງລະບົບໃດໜຶ່ງໃຫ້ນຳໃຊ້ໄດ້ສະດວກ ແລະ/ຫລື ຜູ້ທີ່ໄດ້ພະຍາຍາມເຂົ້າຫາແຫຼ່ງທຶນຈາກບັນດາທະນາຄານການຄ້າເພື່ອຂະຫຍາຍລະບົບນ້ຳປະປາແຕ່ບໍ່ປະສົບຜົນສຳເລັດຍ້ອນເງື່ອນໄຂຄ້ຳປະກັນບໍ່ພຽງພໍ ຫຼື ຍ້ອນເງື່ອນໄຂຂອງການຊຳລະທຶນຄືນ. ໂຄງການນີ້ຍັງຈະປັບປຸງສຸຂະພາບຂອງຜູ້ຢູ່ອາໃສໃນເຂດເທດສະບານ ໂດຍການເນັ້ນໜັກໃສ່ແຜນງານປັບປຸງສຸຂາພິບານແລະສຸຂາອະນາໄມ. ໃນປີ 2009, ຜົນກະທົບຈາກສຸຂາພິບານແລະສຸຂາອະນາໄມທີ່ບໍ່ດີ ໄດ້ເກີດມູນຄ່າດ້ານເສດຖະກິດສູງເຖິງ 1,6 ຕື້ກີບ (193 ລ້ານ ໂດລາ) ຕໍ່ປີ, ທຽບເທົ່າກັບ 5,6% ຂອງ ຈີດີພີປະຈຳປີຂອງປະເທດ ແລະ ປະມານ 280.000 ກີບ (34,4 ໂດລາ) ຕໍ່ຄົນຕໍ່ປີ. ໂຄງການນີ້ຈະເສີມສ້າງໂຄງການຕ່າງໆຂອງຂະແໜງການຍ່ອຍທີ່ໄດ້ປະຕິບັດຜ່ານມາ ຫຼື ພວມດຳເນີນການຢູ່ໃນປະຈຸບັນຢູ່ໃນສປປ ລາວ. ການທົບທວນກາງພາກໂດຍພາກສ່ວນພາຍນອກ ເພື່ອທົບທວນ STWSP (ໝາຍເຫດ 6) ໄດ້ປະເມີນການປະຕິບັດໂຄງການທຽບກັບບົດຮຽນຫຼັກ. ການທົບທວນນີ້ໄດ້ພົບວ່າ (i) ເທັກໂນໂລຍີ ແລະ ການອອກແບບຂອງລະບົບສະໜອງນ້ຳໄດ້ຖືກປັບປຸງດີຂຶ້ນ ໂດຍການປັບປ່ຽນໃຫ້ແທດເໝາະກັບສະພາບການ ແລະ ຄວາມອາດສາມາດຂອງທ້ອງຖິ່ນ; (ii) ຂໍ້ຜູກມັດອັນໜັກແໜ້ນຂອງລັດຖະບານແລະຄູ່ຮ່ວມພັດທະນາເພື່ອຊ່ວຍເຫຼືອນ້ຳປະປາແຂວງໃຫ້ກາຍມາເປັນຮູບແບບບໍລິສັດນັ້ນ ໄດ້ຊ່ວຍປັບປຸງຄວາມອາດສາມາດຂອງພວກເຂົາໃຫ້ເຂັ້ມແຂງຂຶ້ນ ເພື່ອເຮັດໃຫ້ພື້ນຖານໂຄງລ່າງແລະຜົນປະໂຫຍດຂອງໂຄງການມີຄວາມຍືນຍົງຕໍ່ໄປ; (iii) ການເຂົ້າຮ່ວມຂອງຊຸມຊົນທີ່ເພີ້ມຂຶ້ນເລື້ອຍໆໃນການວາງແຜນແລະອອກແບບນັ້ນ ໄດ້ສົ່ງຜົນໃຫ້ການລົງນີ້ເປັນບູລິມະສິດອັນສຳຄັນແລະທັງເຮັດໃຫ້ຊຸມຊົນມີຄວາມເປັນເຈົ້າການໃນຊັບສິນ; (iv) ການຊ່ວຍເຫຼືອຂອງໂຄງການທີ່ມີລັກສະນະສະເພາະນີ້ໄດ້ຊ່ວຍແກ້ໄຂອຸປະສັກຂອງຄົນທຸກຍາກໃນການເຂົ້າເຖິງນ້ຳໃຊ້ ແລະ ມັນໄດ້ເພີ້ມການເຂົ້ານຳໃຊ້ສິ່ງອຳນວຍຄວາມສະດວກດ້ານສຸຂາພິບານທີ່ໄດ້ຮັບການປັບປຸງດີຂຶ້ນ. ຂໍ້ມູນຈາກໂຄງການໜຶ່ງທີ່ພວມດຳເນີນການຢູ່ໃນປະຈຸບັນໄດ້ສະແດງໃຫ້ເຫັນວ່າຄົວເຮືອນຫຼາຍກວ່າ 95% ໃນ 12 ເມືອງ ໄດ້ມີນ້ຳໃຊ້ທີ່ປອດໄພ ແລະ ຄົວເຮືອນ 97% ໄດ້ມີສິ່ງອຳນວຍຄວາມສະດວກດ້ານສຸຂາພິບານທີ່ໄດ້ຮັບການປັບປຸງດີຂຶ້ນ. ຕົວເລກຄອບຄຸມທີ່ສູງນີ້ ໄດ້ປະກອບສ່ວນຕອບສະໜອງຕາມເງື່ອນໄຂຂອງໂຄງການກໍ່ຄືໃຫ້ຄົວເຮືອນ ໄດ້ມີສິ່ງອຳນວຍຄວາມສະດວກດ້ານສຸຂາພິບານທີ່ໄດ້ຮັບການປັບປຸງດີຂຶ້ນໃນບ້ານເຮືອນຂອງພວກເຂົາ ກ່ອນການເຊື່ອມຕໍ່ກັບລະບົບສະໜອງນ້ຳ.

## ເຫດຜົນອ້າງອີງຂອງໂຄງການ ແລະ ການເຊື່ອມໂຍງເຂົ້າໃນຍຸດທະສາດແຫ່ງຊາດ/ພາກພື້ນ

ໂຄງການຂອງຂະແໜງນ້ຳປະປາແລະສຸຂາພິບານທີ່ສະເໜີຂຶ້ນມານັ້ນ ຄາດວ່າຈະເປັນການປັບປຸງສິ່ງອຳນວຍຄວາມສະດວກສາທາລະນະແລະຂະຫຍາຍການເຂົ້າເຖິງນ້ຳສະອາດຜ່ານທໍ່ທີ່ປອດໄພ ແລະ ສຸຂາພິບານສຳລັບຜູ້ຢູ່ອາໃສໃນເຂດເທດສາະບານຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ). ໂຄງການນີ້ ຈະໄດ້ຮັບງົບປະມານຈາກເງິນກູ້ຢືມໃຫ້ຂະແໜງການ ຍ້ອນວ່າມັນມີເງື່ອນໄຂຄົບຖ້ວນຕາມນະໂຍບາຍຂອງເອດີບີ ສຳລັບການກູ້ຢືມຂະແໜງການ. ເຊິ່ງໂຄງການຈະຖືກອອກແບບຢ່າງສອດຄ່ອງກັບນະໂຍບາຍຂະແໜງການແລະແຜນການລົງທຶນໃນການສະ

ໜອງນ້ຳສະອາດ ແລະ ສຸຂາພິບານຂອງລັດຖະບານແຫ່ງສປປ ລາວ. ມັນຈະປະກອບສ່ວນໃສ່ເປົ້າໝາຍຂອງລັດຖະບານເພື່ອໃຫ້ມີການສະໜອງນ້ຳສະອາດຜ່ານທໍ່ໃຫ້ໄດ້ເຖິງ 80% ແລະ ໃຫ້ມີສຸຂາພິບານປະຈຳທີ່ເຖິງ 90% ຂອງປະຊາກອນໃນເຂດເທດສະບານພາຍໃນປີ 2020. ໂຄງການຈະສະໜອງງົບປະມານສຳລັບການລົງທຶນໃສ່ການພັດທະນາພື້ນຖານໂຄງລ່າງ, ພ້ອມດຽວກັນກໍ່ເນັ້ນໜັກໃສ່ການປັບປຸງນະໂຍບາຍຂະແໜງການໃນຂົງເຂດຂອງການຫັນໄປສູ່ຮູບແບບບໍລິສັດ, ການຄຸ້ມຄອງນ້ຳທີ່ບໍ່ມີລາຍຮັບ, ແຜນນ້ຳປະປາປອດໄພແລະການຂຶ້ນທະບຽນຄຸ້ມຄອງຊັບສິນ. ໂຄງການຈະຈັດຕັ້ງປະຕິບັດການປະຕິຮູບນະໂຍບາຍ ເພື່ອດຳເນີນໂຄງການແຜນງານສະໜອງນ້ຳສະອາດແລະສຸຂາພິບານໃນຕົວເມືອງນ້ອຍ (STWSP). ເປົ້າໝາຍແຫ່ງຊາດຂອງ ສປປ ລາວ ດ້ານການສະໜອງນ້ຳສະອາດແລະສຸຂາພິບານແຕ່ນີ້ເຖິງປີ 2015 ແມ່ນໃຫ້ໄດ້ 80% ແລະ 60% ຕາມລຳດັບ. ນັບແຕ່ປີ 1995 ເປັນຕົ້ນມາ, ອັດຕາສ່ວນຮ້ອຍຂອງປະຊາກອນໃນປີ 2010 ທີ່ໄດ້ເຂົ້າເຖິງນ້ຳໃຊ້ທີ່ສະອາດແລະສຸຂາພິບານທີ່ໄດ້ຮັບການປັບປຸງນັ້ນໄດ້ເພີ່ມຂຶ້ນ 36% ແລະ 50% ຕາມລຳດັບ. ຕົວເລກການຄອບຄຸມແຫ່ງຊາດໃນປີ 2010 ໄດ້ຄາດຄະເນໄວ້ວ່າຈະໃຫ້ເຖິງ 67% ແລະ 63% ຕາມລຳດັບ. ປະມານ 77% ຂອງປະຊາກອນໃນເຂດເທດສະບານໃນປີ 2010 ໄດ້ໃຊ້ແຫຼ່ງນ້ຳດື່ມທີ່ໄດ້ຮັບການປັບປຸງ, ຊຶ່ງໃນນັ້ນ ການບໍລິການນ້ຳສະອາດຜ່ານທໍ່ນ້ຳໄດ້ເພີ່ມເປັນ 55%. ປະມານ 89% ໄດ້ໃຊ້ສິ່ງອຳນວຍຄວາມສະດວກດ້ານສຸຂາພິບານທີ່ໄດ້ຮັບການປັບປຸງ. ນັບແຕ່ຊຸມປີ 1990, ເອດີບີ ໄດ້ປະກອບສ່ວນໃສ່ບັນດາເປົ້າໝາຍແຫ່ງຊາດເຫລົ່ານີ້. ບັນດາໂຄງການຂອງເອດີບີ, ບາງໂຄງການກໍ່ສະໜອງງົບປະມານຮ່ວມກັບບັນດາຄູ່ຮ່ວມພັດທະນາ, ຊຶ່ງໄດ້ສະໜອງງົບປະມານໃນການກໍ່ສ້າງລະບົບສະໜອງນ້ຳສະອາດຜ່ານທໍ່ຂຶ້ນໃໝ່ປະມານ 39 ລະບົບ ແລະ ໄດ້ບຳລຸງຮັກສາຄືນປະມານ 3 ລະບົບໃນບັນດາຕົວເມືອງຂອງ ສປປ ລາວ, ຊຶ່ງມັນໄດ້ປັບປຸງການເຂົ້າເຖິງຂອງປະຊາຊົນໄດ້ເກືອບ 300.000 ຄົນ. ລະບົບສະໜອງນ້ຳສະອາດເພີ່ມຕື່ມອີກ 2 ລະບົບ, ຊຶ່ງລວມທັງການສ້ອມແປງຄືນອີກ 4 ລະບົບ, ແມ່ນພວມດຳເນີນການກໍ່ສ້າງ ຫຼື ພວມກະກຽມການສຶກສາຄວາມເປັນໄປໄດ້. ໃນປີ 2011, ປະຊາກອນຂອງ ສປປ ລາວ ຄາດວ່າຈະມີຈຳນວນ 6,385 ລ້ານຄົນ. ໃນນັ້ນ ປະມານ 33% ໄດ້ຖືກຈັດປະເພດເປັນຄົນອາໄສໃນເຂດເທດສະບານປະມານ 150 ຢູ່ໃຈກາງຕົວເມືອງໃນ 145 ເມືອງ. ຄາດຄະເນມູນຄ່າລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນຄາດວ່າຈະເຖິງ 1.281 ໂດລາ ໃນປີ 2011. ຄວາມທຸກຍາກໄດ້ຫຼຸດລົງປະມານ 27,6% ໃນປີ 2008 ແລະ ຄາດວ່າຈະຫຼຸດລົງ 1% ຕໍ່ປີ ໂດຍອີງຕາມການຂະຫຍາຍຕົວທາງເສດຖະກິດໃນປະຈຸບັນ. ການພັດທະນາຕົວເມືອງນ້ອຍໃຫ້ເປັນສູນກາງຫຼັກຂອງການບໍລິຫານແລະເສດຖະກິດ ແມ່ນບາດກ້າວອັນສຳຄັນໃນການປັບປຸງເງື່ອນໄຂການດຳລົງຊີວິດ, ການສ້າງຄວາມເຂັ້ມແຂງໃຫ້ການເຊື່ອມຕໍ່ ລະຫວ່າງ ເທດສະບານ-ຊົນນະບົດ, ສ້າງການຈ້າງແຮງງານ ແລະ ຫຼຸດຜ່ອນລະດັບຄວາມແຕກໂຕນດ້ານລາຍຮັບໃນຂົງເຂດນັ້ນ. ການພັດທະນາພື້ນຖານໂຄງລ່າງແລະການປັບປຸງການໃຫ້ບໍລິການໃນຕົວເມືອງຕ່າງໆ, ໂດຍສະເພາະແມ່ນໃນຂົງເຂດລຽບຕາມເສັ້ນທາງຂົນສົ່ງເຊື່ອມຕໍ່ອານຸພາກພື້ນແມ່ນ້ຳຂອງ ຫຼື ໃນຂົງເຂດໃກ້ຄຽງທີ່ມີສິ່ງດຶງດູດການທ່ອງທ່ຽວອັນພົ້ນເດັ່ນ, ຈະຊ່ວຍຫັນປ່ຽນບັນດາຕົວເມືອງເຫລົ່ານັ້ນໃຫ້ການເປັນສູນກາງເສດຖະກິດ ແລະ ການທ່ອງທ່ຽວ.

## ■ ຜົນໄດ້ຮັບຈາກການພັດທະນາ

–

## ຜົນໄດ້ຮັບຂອງໂຄງການ

| ຜົນໄດ້ຮັບລະອຽດ | ຄວາມຄືບໜ້າທີ່ນຳໄປສູ່ຜົນໄດ້ຮັບ |
| --- | --- |
| – | – |

## ຜົນໄດ້ຮັບ ແລະ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ

| ລາຍລະອຽດຜົນໄດ້ຮັບຂອງໂຄງການ | ສະຖານະພາບຂອງຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ (ຜົນໄດ້ຮັບ, ກິດຈະກຳ ແລະ ບັນຫາຕ່າງໆ) |
| --- | --- |
| – | – |
| **ສະຖານະພາບຂອງຈຸດປະສົງການພັດທະນາ** | **ການປ່ຽນແປງພາຍນອກ** |
| – | – |

## ໂອກາດທາງທຸລະກິດ

| | |
| --- | --- |
| **ວັນທີການບັນທຶກຄັ້ງທຳອິດ** | 07 ທັນວາ 2012 |

**ການບໍລິການໃຫ້ຄຳປຶກສາ**

ບໍລິສັດໃດໜຶ່ງຈະໄດ້ຖືກວ່າຈ້າງກໍ່ຕໍ່ເມື່ອທາກພວກເຂົາໄດ້ປະຕິບັດໂດຍສອດຄ່ອງກັບຄຳແນະນຳຂອງ ເອກີບີ ກ່ຽວກັບການວ່າຈ້າງທີ່ປຶກສາ (ສະບັບປີ 2010, ຕາມການດັດແກ້ໃນແຕ່ລະໄລຍະ). ລວມທັງໝົດຈະມີ 11 ຕຳແໜ່ງ ແລະ 40 ຄົນ-ເດືອນ (6 ຄົນ ເປັນຜູ້ຊ່ຽວຊານຕ່າງປະເທດ ໃນຈຳນວນ 18 ຄົນ-ເດືອນ ແລະ 5 ຄົນເປັນຊ່ຽວຊາຍພາຍໃນຈຳນວນ 22 ຄົນ-ເດືອນ). ບໍລິສັດນີ້ຈະຖືກຄັດເລືອກ ໂດຍອີງຕາມຄຸນນະພາບແລະລາຄາ (ຕາມອັດຕາສ່ວນ 90:10) ໂດຍນຳໃຊ້ບົດສະເໜີວິຊາການແບບງ່າຍດາຍ. ທີ່ປຶກສາລາຍບຸກຄົນອາດຖືກຈ້າງໃນໄລຍະການດຳເນີນການຊ່ວຍເຫຼືອດ້ານວິຊາການ ເພື່ອຊ່ວຍດຳເນີນໜ້າວຽກທີ່ບໍ່ໄດ້ຄາດໝາຍໄວ້ແຕ່ຕອນຕົ້ນ ແລະ/ຫຼື ເພື່ອໃຫ້ການຊ່ວຍເຫຼືອໃນຕອນເລີ້ມຕົ້ນກ່ອນການກູ້ຢືມຈະມີຜົນບັງຄັບໃຊ້. ການຊ່ວຍເຫຼືອດ້ານວິຊາການຈະພິຈະລະນາຢ່າງເໝາະສົມເຖິງດ້ານຕ່າງໆທີ່ກ່ຽວຂ້ອງກັບໂຄງການດັ່ງຕໍ່ໄປນີ້: (i) ການປະເມີນລະອຽດເຖິງຄວາມອາດສາມາດຂອງອົງການບໍລິຫານໂຄງການ ແລະ ອົງການຈັດຕັ້ງປະຕິບັດໂຄງການ, ພ້ອມທັງສະເໜີແຜນແກ້ໄຂ ເພື່ອສ້າງຄວາມອາດສາມາດຂອງພວກເຂົາ ເພື່ອຫຼຸດຜ່ອນຄວາມສ່ຽງໃນການຄຸ້ມຄອງການຈັດຊື້ຈັດຈ້າງແລະການຄຸ້ມຄອງການເງິນ; (ii) ແຜນຈັດຊື້ຈັດຈ້າງທີ່ກ່ຽວຂ້ອງກັບເງິນກູ້ຢືມທີ່ໄດ້ສະເໜີຂຶ້ນມາ ຫຼື ຮ່າງແຜນຈັດຊື້ຈັດຈ້າງພ້ອມທັງແນະນຳລະດັບບູລິມະສິດ ຫຼື ແນະນຳການທົບທວນຄືນຫຼັງ (ຖ້າເໝາະສົມ) ໂດຍອີງຕາມການປະເມີນຄວາມອາດສາມາດຂອງອົງການບໍລິຫານໂຄງການ ແລະ ອົງການຈັດຕັ້ງປະຕິບັດໂຄງການ; (iii) ຮ່າງແຜນຈັດຕັ້ງປະຕິບັດທີ່ປະກອບມີລຳດັບຂອງການຮັບສະໝັກທີ່ປຶກສາ ແລະ ການປະ

ມູນຈັດຊື້ຈັດຈ້າງ ແລະ ການມອບສັນຍາຈັດຊື້ຈັດຈ້າງ; (iv) ຮ່າງລະບົບຄຸ້ມຄອງການປະຕິບັດໂຄງການ; ແລະ (v) ການບໍລິຫານກອງປະຊຸມແລະສໍາມະນາ.

**ການຈັດຊື້**

–

**ປະກາດການຈັດຊື້ແລະຈັດຈ້າງທີ່ປຶກສາ**

http://www.adb.org/projects/45301-001/business-opportunities

## ຕາຕະລາງເວລາ

| | |
|---|---|
| ການອະນຸມັດແນວຄວາມຄິດ | – |
| ການພິສູດຂໍ້ເທັດຈິງ | – |
| ກອງປະຊຸມປະເມີນການຄຸ້ມຄອງ | – |
| ອະນຸມັດ | 03 ກັນຍາ 2012 |
| ລົງທົບທວນໂຄງການຄັ້ງສຸດທ້າຍ | – |

## ຂັ້ນຕອນການປະຕິບັດ

| ເລກທີອະນຸມັດ | ອະນຸມັດ | ລາຍເຊັນ | ການສ້າງຜົນໄດ້ຮັບ | ຄັ້ງສຸດທ້າຍ | | |
|---|---|---|---|---|---|---|
| | | | | ເບື້ອງຕົ້ນ | ປັບປຸງ | ຕົວຈິງ |
| ການຊ່ວຍເຫຼືອດ້ານວິຊາການ ເລກທີ 8150 | 03 ກັນຍາ 2012 | 18 ຕຸລາ 2012 | 18 ຕຸລາ 2012 | 31 ທັນວາ 2013 | – | – |

## ການປະຕິບັດ

| ວັນທີ | ເລກທີອະນຸມັດ | ເອດີບີ (ພັນໂດລາ) | ແຫລ່ງທຶນອື່ນໆ (ພັນໂດລາ) | ເປີເຊັນສຸດທິ |
|---|---|---|---|---|
| **ສັນຍາການໃຫ້ທຶນແບບທະວີຄູນ** | | | | |
| **ການເບີກຈ່າຍແບບທະວີຄູນ** | | | | |

## ຈຳນວນເງິນ ສຳລັບ ການຊ່ວຍເຫຼືອດ້ານວິຊາການ (ທີ່ວໜ່ວຍເປັນ ພັນໂດລາສະຫະລັດ)

| ໝາຍເລກ ອະນຸມັດ | ຈຳນວນເງິນ ທີ່ໄດ້ອະນຸມັດ | ຈຳນວນ ເງິນທັບ ທອນຄືນ | ລວມຍອດວົງເງິນ ຜູກມັດ | ງົບດູນວົງເງິນບໍ່ໄດ້ ຜູກມັດ | ລວມຍອດເງິນໂອນ | ງົບດູນຄ້າງໂອນ |
|---|---|---|---|---|---|---|
| ການຊ່ວຍ ເຫຼືອດ້ານ ວິຊາການ ເລກທີ 8150 | 800 | 800 | 0 | 800 | 0 | 800 |

## ລາຍລະອຽດບ່ອນສອບຖາມ ແລະ ການປັບປຸງ

| | |
|---|---|
| **ພະນັກງານຮັບຜິດຊອບຂອງເອດີບີ** | ທ່ານ ອານຸມາ ຈຽນ (Anupma Jain) (ajain@adb.org) |
| **ກົມຮັບຜິດຊອບຂອງເອດີບີ** | ກົມອາຊີຕາເວັນອອກສ່ຽງໃຕ້ |
| **ພະແນກຮັບຜິດຊອບຂອງເອດີບີ** | ພະແນກພັດທະນາຕົວເມືອງແລະນ້ຳ |
| **ອົງການຈັດຕັ້ງປະຕິບັດ** | ກະຊວງໂຍທາທິການແລະຂົນສົ່ງ<br>ທ່ານ ຄຳທະວີ ທິບພະຈັນ, ວ່າການແທນຫົວໜ້າກົມ |

## ວັບໄຊ້ ກ່ຽວກັບ ເອກະສານທີ່ກ່ຽວຂ້ອງ

| | |
|---|---|
| **ເວັບໄຊ້ໂຄງການ** | http://www.adb.org/projects/45301-001/main |
| **ລາຍການເອກະສານໂຄງການ** | http://www.adb.org/projects/45301-001/documents |